ຄວາມສະດວກໃນການດຳເນີນທຸລະກິດ ແລະ ສິ່ງທ້າທາຍຂອງການລົງທຶນຕ່າງປະເທດຢູ່ ສປປ ລາວ

ໂດຍ

Mr. Rufus Pinto, ປະທານ ສະພາການຄ້າອົດສະຕຣາລີ ຢູ່ ສປປ ລາວ

ກອງປະຊຸມທຸລະກິດລາວ ຄັ້ງທີ 12

ວັນທີ 12 ພະຈິກ, ທີ່ນະຄອນຫຼວງວຽງຈັນ, ສປປ ລາວ

- ຮຽນ ພະນະທ່ານ ທອງລຸນ ສີສຸລິດ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ;
- ຮຽນ ທ່ານ ນາງເຂັມມະນີ ພົນເສນາ, ລັດຖະມົນຕີກະຊວງອຸດສະຫະກຳ ແລະ ການຄ້າ;
- ຮຽນ ບັນດາທ່ານ ລັດຖະມົນຕີ, ຮອງລັດຖະມົນຕີ, ຫົວໜ້າກົມ, ຮອງຫົວໜ້າກົມ;
- ຮຽນບັນດາເອກອັກຄະລັດຖະທູດ, ທູຕານຸທູດ, ຫົວໜ້າອົງການຈັດຕັ້ງສາກົນ;
- ສະແດງຄວາມນັບຖືມາຍັງ ນັກທຸລະກິດທັງພາຍໃນ ແລະ ຕ່າງປະເທດທຸກທ່ານ:

ຂ້າພະເຈົ້າມີຄວາມປິຕິຍິນດີ ແລະ ເປັນກຽດຢ່າງສູງ ທີ່ໄດ້ມີໂອກາດມາກ່າວ ແລະ ເຂົ້າຮ່ວມ ກອງປະຊຸມທຸລະກິດລາວໃນມື້ນີ້. ຂ້າພະເຈົ້າຊື່ ຣູຟາສ ພິນໂຕ, ເປັນປະທານສະພາການຄ້າອົດສະຕຣາລີ ຢູ່ ສປປ ລາວ. ຂ້າພະເຈົ້າໃນນາມ ສະພາການຄ້າອົດສະຕຣາລີ ຮູ້ສຶກເປັນກຽດຢ່າງສູງ ທີ່ ທ່ານ ອຸເດດ ສຸວັນນະວົງ, ປະທານສະພາການຄ້າ ແລະ ອຸດສະຫະກຳ ແຫ່ງຊາດລາວ ແລະ ຄະນະ ມອບໂອກາດອັນສຳຄັນນີ້ ໃຫ້ຂ້າພະເຈົ້າ ໄດ້ມາກ່າວໃນເວທີນີ້ ໂດຍຕາງໜ້າໃຫ້ ສະພາການຄ້າອາເມລິກາ, ກຸ່ມນັກທຸລະກິດອັງກິດ, ສະພາການຄ້າສະຫະພາບເອີຣົບ ແລະ ສະພາການຄ້າຍີ່ປຸ່ນ ເຊິ່ງທັງໝົດຖືເປັນສະພາການຄ້າສາກົນ ທີ່ມີສຳນັກງານຕັ້ງ ຢູ່ ສປປ ລາວ.

ສະພາການຄ້າອົດສະຕຣາລີ ແມ່ນ ສະພາການຄ້າສາກົນ ທີ່ເກົ່າແກ່ແຫ່ງໜຶ່ງ ຢູ່ໃນ ສປປ ລາວ ແລະ ມີທັງໝົດຫຼາຍກວ່າ 120 ສະມາຊິກ ເຊິ່ງມີທັງນັກທຸລະກິດຄົນລາວ ແລະ ຄົນຕ່າງປະເທດ. ເປົ້າໝາຍຂອງສະພາການຄ້າອົດສະຕຣາລີ ແມ່ນແນໃສ່ ເປັນສະພາການຄ້າສາກົນທີ່ດີ, ຍົກສູງຄຸນຄ່າຂອງຄວາມເປັນອົດສະຕຣາລີ ໃນການດຳເນີນທຸລະກິດທຸກດ້ານ.

ຕາງໜ້າສະພາການຄ້າສາກົນທັງໝົດ ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍມາຍັງ ລັດຖະບານແຫ່ງ ສປປ ລາວ ແລະສະພາການຄ້າລາວ ທີ່ໄດ້ຈັດກອງປະຊຸມທຸລະກິດລາວຂຶ້ນ ໃນມື້ນີ້. ການເຈລະຈາລະຫວ່າງ ພາກລັດ ແລະ ເອກະຊົນສ່ວນຫຼາຍແລ້ວບໍ່ແມ່ນເລື່ອງງ່າຍ, ມັນອາດຈະເປັນຂະບວນການທີ່ໃຊ້ເວລາດົນ ແລະ ເຕັມໄປດ້ວຍສິ່ງທ້າທາຍ, ແຕ່ມັນແມ່ນຂະບວນການທີ່ສຳຄັນທີ່ຈະນຳໄປເຖິງການປະຕິຮູບທຸລະກິດ ທີ່ລັດຖະບານມີເຈດຈຳນົງໄວ້ແລ້ວ.

ມື້ນີ້ ພວກເຮົາຖືກແນະນຳໃຫ້ມາປຶກສາຫາລືກັນ ໃນຫົວຂໍ້ **“ຄວາມສະດວກໃນການດຳເນີນທຸລະກິດ ແລະ ສິ່ງທ້າທາຍຂອງການລົງທຶນຕ່າງປະເທດ ຢູ່ໃນ ສປປ ລາວ”.**

ຮຽນພະນະທ່ານ ແລະ ແຂກທີ່ມີກຽດ,

ຂ້າພະເຈົ້າຂໍສະເໜີເປັນ 3 ພາກ ຄື ພາກທີ 1) ຂໍສະເໜີຄຳແນະນຳບາງອັນ ກ່ຽວຂ້ອງກັບສະພາບເສດຖະກິດຂອງໂລກໃນປະຈຸບັນ ແລະ ຈຸດຢືນຂອງ ສປປ ລາວ ຢູ່ບ່ອນໃດ - ຍ້ອນແນວໂນ້ມສະພາບລວມຂອງໂລກໃນປະຈຸບັນ ເຮັດໃຫ້ມີສິ່ງທ້າທາຍເກີດຂື້ນຫຼາຍດ້ານ, ສປປ ລາວຕັ້ງຢູ່ພາກພື້ນທີ່ມີເສດຖະກິດທີ່ເຕີບໃຫ່ຍ ແລະ ເຄື່ອນເໜັງຕະຫຼອດເວລາ ທັງເຕັມໄປດ້ວຍໂອກາດ ແລະ ສິ່ງທີ່ມີຄຸນຄ່າຫຼາຍດ້ານ. ພາກທີ 2) ຈຸດຢາກເວົ້າຂອງພວກເຮົາແມ່ນຄຸນຄ່າຂອງພວກເຮົາ ຕໍ່ສະພາບການດັ່ງກ່າວມີຄືແນວໃດ, ແລະ ຍ້ອນເຫດຜົນຫຍັງ ພວກເຮົາຈິ່ງມາລົງທຶນຢູ່ ສປປ ລາວ? ແລະ ພາກສຸດທ້າຍແມ່ນ ພາກທີ 3) ຂ້າພະເຈົ້າຈະເວົ້າເຖິງ ສິ່ງທ້າທາຍຕ່າງໆທີ່ນັກທຸລະກິດຕ່າງປະເທດ ພວມປະເຊີນຢູ່.

## *ສະພາບແວດລ້ອມຂອງໂລກໃນປະຈຸບັນ.*

ສະພາບເສດຖະກິດຂອງໂລກປະຈຸບັນແມ່ນ ມີການປ່ຽນແປງທາງດ້ານໂຄງສ້າງ. ມັນບໍ່ແມ່ນການປະຕິວັດ ອຸດສະຫະກຳ ທີ່ພວກເຮົາເຄີຍເຫັນຜ່ານມາໃນອາດີດ. ຂ້າພະເຈົ້າເຊື່ອວ່າ ຖ້າມື້ນີ້ ເຮົາໝຸນໝ່ວຍໂລກແລະເອົາມືຊີ້ໃສ່ປະເທດໃດໜຶ່ງ ເຮົາຈະຮູ້ທັນທີວ່າ ປະເທດນັ້ນມີສິ່ງທ້າທາຍຫຼາຍດ້ານ; ເຊັ່ນ ກ່ຽວຂ້ອງກັບສົງຄາມການຄ້າລະຫວ່າງ ສະຫະລັດອາເມລິກາ ແລະ ຈີນ; ການເຈລະຈາ ການອອກຈາກສະຫະພາບເອີຣົບຂອງປະເທດອັງກິດ; ບັນຫາການເມືອງຢູ່ໃນປະເທດ ອາເມລິກາໃຕ້; ສົງຄາມກາງເມືອງຂອງຫຼາຍປະເທດໃນທະວີບອາຟຣິກາ; ຫຼື ການຖົດຖອຍຂອງເສດຖະກິດ ແລະ ການໄດ້ຮັບຜົນຕອບແທນຕ່ຳ ຂອງການລົງທຶນຢູ່ທະວີບ ໂອຊີອາເນ່.

ການລົງທຶນຕ່າງປະເທດ ມີບົດບາດສຳຄັນຫຼາຍ ໃນການພັດທະນາເສດຖະກິດ ຂອງບັນດາປະເທດທີ່ກຳລັງພັດທະນາໃນໂລກ ເຊັ່ນ ສປປ ລາວ. ມັນຍັງສາມາດສະໜອງທຶນຮອນ ທີ່ສ່ວນຫຼາຍແລ້ວບັນດາປະເທດເຫຼົ່ານັ້ນມີບໍ່ພຽງພໍພາຍໃນປະເທດ, ນອກນັ້ນ ການລົງທຶນຕ່າງປະເທດຍັງສາມາດ ຖ່າຍທອດເຕັກໂນໂລຊີ, ຄວາມຮູ້ ແລະ ທັກສະໃໝ່ໆ ຜ່ານການເຝິກອົບຮົມ ທີ່ສາມາດຊ່ວຍພັດທະນາເສດຖະກິດໄດ້ໂດຍກົງ. ສະຫຼຸບກໍ່ຄື ການລົງທຶນຕ່າງປະເທດ ໄດ້ເຮັດໜ້າທີ່ ແລະ ມີບົດບາດສຳຄັນຕໍ່ການພັດທະນາເສດຖະກິດ ຢູ່ ສປປ ລາວ.

ຍ້ອນຄວາມເຄັ່ງຕຶງຂອງການຄ້າລະຫວ່າງສະຫະລັດອາເມລິກາ ແລະ ຈີນ, ຫຼາຍປະເທດພວມຫາທາງເຮັດໃຫ້ສິນຄ້າຂອງຕົນມີຄວາມຫຼາກຫຼາຍຂຶ້ນກ່ວາເກົ່າ ແລະ ຊອກກາຕະຫຼາດໃໝ່ ນອກຈາກປະເທດຈີນ. ເຮັດໃຫ້ບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ ກາຍເປັນປະເທດທາງເລືອກຂອງນັກລົງທຶນ. ເຫດຜົນກໍ່ຄື ບັນດາປະເທດເຫຼົ່ານີ້ມີຫຼາຍປັດໃຈຊູກຍູ້ການລົງທຶນທີ່ເຂັ້ມແຂງ, ສຳຄັນໄປກວ່ານັ້ນກໍ່ຄື ບັນດາປະເທດເຫຼົ່ານີ້ ຍັງສາມາດສະໜອງຫຼາຍປັດໃຈທີ່ເປັນການດຶງດູດຄວາມສົນໃຈຂອງນັກລົງທຶນຕ່າງປະເທດນຳ. ສຳລັບ ສປປ ລາວ, ທີ່ຕັ້ງທີ່ມີຂໍ້ຈຳກັດ ແລະ ປະຊາກອນໜ້ອຍ ຖືເປັນປັດໃຈເຊີນຊວນໃຫ້ນັກລົງທຶນໃຫ້ຄວາມສົນໃຈກວ່າບັນດາປະເທດໃກ້ຄຽງ. ໂດຍສະເພາະ ມີບາງປະເທດເຊັ່ນ ຫວຽດນາມ, ໄທ ແລະ ອິນເດຍ ທີ່ໄດ້ຜ່ານການປະຕິຮູບດ້ານເສດຖະກິດ ແລະ ມີສະຖາບັນທີ່ກ່ຽວຂ້ອງທີ່ເຂັ້ມແຂງແລ້ວ ເຮັດໃຫ້ໂຕຊີ້ວັດ ເງື່ອນໄຂການເຮັດທຸລະກິດຂອງທະນາຄານໂລກຂອງທັງສາມປະເທດ ເຫັນຜົນດີຂຶ້ນຢ່າງຈະແຈ້ງ ໃນຊຸມປີຜ່ານມາ.

ເພື່ອເປັນການສະໜັບສະໜູນສິ່ງທີ່ເວົ້າມາ, ຂ້າພະເຈົ້າຂໍມີຄຳເຫັນຕື່ມ ເພື່ອເພີ່ມຄວາມເຂົ້າໃຈນຳກັນໃນຫົວຂໍ້ທີ່ວ່າ

➢ **<u>ເປັນຫຍັງນັກລົງທຶນ ຈຶ່ງລົງທຶນໃນຕ່າງປະເທດ?</u>**

ມີຜົນສຳຫຼວດອັນໜຶ່ງ ຂອງ "ຄະນະກຳມະທິການ ການລົງທຶນ ແລະ ຄວາມໝັ້ນຄົງຂອງອົດສະຕຣາລີ" ໃນຫົວຂໍ້ ນັກລົງທຶນອົດສະຕຣາລີ ກັບການຊອກໂອກາດໃນການລົງທຶນຢູ່ຕ່າງປະເທດ. ຜົນຂອງການສຳຫຼວດດັ່ງກ່າວ ພົບວ່າ ມີ ສາມເຫດຜົນ ທີ່ຄົນອົດສະຕຣາລີ ໄປລົງທຶນຢູ່ຕ່າງປະເທດຄື:

- **ເພີ່ມຄວາມຫຼາກຫຼາຍຂອງທຸລະກິດ** - ການກະຈາຍການລົງທຶນໃຫ້ກວ້າງອອກ ໃນຫຼາຍປະເທດ ແລະ ມີຕະຫຼາດຢູ່ຫຼາຍບ່ອນ ສາມາດຫຼຸດຜ່ອນຜົນກະທົບຕໍ່ທຸລະກິດໂດຍລວມ ໂດຍສະເພາະໃນເວລາປະເທດໃດໜຶ່ງເກີດມີການຖົດຖອຍດ້ານເສດຖະກິດ.

- **ການເຕີບໃຫ່ຍຂອງທຸລະກິດ** - ການລົງທຶນຕ່າງປະເທດ ຈະເປີດໂອກາດໃຫ້ບໍລິສັດຂອງເຂົາເຈົ້າ ໄດ້ຮັບໂອກາດດີ ຈາກສັກກະຍະພາບຂອງການເຕີບໃຫຍ່ດ້ານເສດຖະກິດຂອງປະເທດທີ່ເຂົາເຈົ້າໄປລົງທຶນ, ໂດຍສະເພາະແມ່ນ ບັນດາຕະຫຼາດເກີດໃໝ່.
- **ມີຫຼາຍທາງເລືອກ** - ເຂົາເຈົ້າສາມາດລົງທຶນໃນຫຼາຍບໍລິສັດ, ຫຼາຍອຸດສະຫະກຳ ແລະ ຫຼາຍແຫຼ່ງທຶນ ທີ່ບໍ່ມີ ຢູ່ພາຍໃນ ຫຼື ລົງທຶນຍາກຢູ່ພາຍໃນປະເທດ.

➢ <u>ເປັນຫຍັງ ຈຶ່ງມາລົງທຶນຢູ່ ສປປ ລາວ?</u>

ເພື່ອເປັນການຕອບຄຳຖາມນີ້ ພວກເຮົາຂໍ ເວົ້າເຖິງຄຸນຄ່າດ້ານດີ ຂອງການມາລົງທຶນຢູ່ ສປປ ລາວ. ໝາຍຄວາມວ່າ ຈະຕ້ອງມີການລະບຸລະອຽດຈະແຈ້ງ ວ່າ ເປັນຫຍັງນັກລົງທຶນຕ່າງປະເທດ ຈຶ່ງມາລົງທຶນຢູ່ ສປປ ລາວ ແລະ ຈະເອົາຈຸດນີ້ ໄປເຜີຍແຜ່ຕໍ່ນັກລົງທຶນທົ່ວໂລກ.

ໃນສະພາບປະຈຸບັນ ພວກເຮົາເຫັນຄຸນຄ່າຂອງການມາລົງທຶນຢູ່ ສປປ ລາວ ດັ່ງຕໍ່ໄປນີ້:

- ມີທີ່ຕັ້ງ ທີ່ເປັນຍຸດທະສາດ
- ມີລັດຖະບານ ທີ່ມີສະເຖຍລະພາບ
- ເປັນປະເທດທີ່ມີຈຸດສຸມໃນການໃຫ້ມີການລົງທຶນຈາກຕ່າງປະເທດ, ດ້ວຍເຈດຈຳນົງຢາກເປີດເສດຖະກິດຂອງລາວ
- ມີປະຊາກອນໜຸ່ມ ທີ່ສາມາດປັບປ່ຽນໄດ້ຕະຫຼອດເວລາ
- ເປັນປະເທດໜຶ່ງ ໃນບັນດາປະເທດອາຊຽນ ທີ່ມີເນື້ອທີ່ດິນກວ້າງໃຫ່ຍ ຄິດໄລ່ຕໍ່ຫົວຄົນ.

ຄຸນຄ່າທີ່ຈຳເປັນທີ່ເວົ້າມາ ແມ່ນ ສິ່ງທີ່ກ່ຽວຂ້ອງກັບຈຸດແຂງຂອງຊາດ ທີ່ສາມາດເຮັດໃຫ້ເກີດຜົນປະໂຫຍດແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດໄດ້ ແລະ ສາມາດເວົ້າໄດ້ວ່າ ເປັນຫຍັງເຂົາເຈົ້າຄວນຈະມາລົງທຶນຢູ່ ສປປ ລາວ ບໍ່ແມ່ນປະເທດອື່ນ.

ຍ້ອນລັດຖະບານໄດ້ລະບຸໄວ້ແລ້ວ ວ່າ ມີສາມຂະແໜງການ ທີ່ຈະດຶງດູດນັກລົງທຶນຕ່າງປະເທດ ຄື 1) ຂະແໜງພະລັງງານ; 2) ຂະແໜງການທ່ອງທ່ຽວ ແລະ 3) ຂະແໜງອາຫານ, ເຄື່ອງດື່ມ ແລະ ກະສິກຳ. ພວກຂ້າພະເຈົ້າ ເຊື່ອໝັ້ນວ່າ ການສືບຕໍ່ເນັ້ນໃສ່ ສາມຂະແໜງການນີ້ ແລະ ເຮັດໃຫ້ສິ່ງທ້າທາຍຕ່າງໆຫຼຸດລົງ ຈະເຮັດໃຫ້ ສປປ ລາວ ສາມາດດຶງດູດນັກລົງທຶນຕ່າງປະເທດໃຫ້ມາ ລົງທຶນໃນສາມຂະແໜງການນີ້ ແທນທີ່ຈະໄປລົງທຶນຢູ່ປະເທດໃກ້ຄຽງ. ຍົກຕົວຢ່າງ, ປະເທດຫວຽດນາມ ປະສົບຜົນສຳເລັດໃນການສົ່ງເສີມການລົງທຶນດ້ານ ໂຮງຈັກໂຮງງານ ແລະ ດ້ານການທ່ອງທ່ຽວ ແລະ ເຮັດໃຫ້ການສົ່ງອອກທັງໝົດ ເທົ່າກັບ ຮ້ອຍ ສ່ວນ ຮ້ອຍ ຂອງ ລາຍໄດ້ມວນລວມຂອງປະເທດ ຫຼື

100% ຂອງ GDP,  ສົມທຽບກັບ ປີ 1995 ທີ່ມີພຽງ 27 ສ່ວນຮ້ອຍ ຂອງ GDP. ຖ້າ ສປປ ລາວ ເຮັດໄດ້ຄື ແນວນີ້ ທີ່ເລືອກສຸມໃສ່ ສອງ ສາມຂະແໜງການເປົ້າໝາຍ ແມ່ນ ຈະສາມາດຍາດໄດ້ການລົງທຶນຈາກພາກພື້ນໃຫ້ມາລົງທຶນໃນ ສປປ ລາວໄດ້ແນ່ນອນ.

**ສິ່ງ<u>ທ້າທາຍ ສຳລັບນັກລົງທຶນຕ່າງປະເທດ ທີ່ມາລົງທຶນ ໃນ ສປປ ລາວ ໃນປະຈຸບັນມີຄືແນວໃດ</u>?**

1) *ຄວາມບໍ່ແນ່ນອນດ້ານນະໂຍບາຍ*

ຢູ່ທົ່ວໂລກ, ນັກລົງທຶນຊອກຫາການນຳໃຊ້ກົດໝາຍທີ່ມີຄວາມຕໍ່ເນື່ອງ, ມີການຈັດຕັ້ງປະຕິບັດລະບຽບກົດໝາຍ ທີ່ເຂັ້ມແຂງ ແລະ ມີນະໂຍບາຍທີ່ແນ່ນອນ.

ຢູ່ ສປປ ລາວ, ຍັງມີຫຼາຍດ້ານທີ່ສາມາດປັບປຸງໄດ້ ເພື່ອໃຫ້ແນ່ໃຈວ່າ ນະໂຍບາຍມີຄວາມຈະແຈ້ງ, ຈັດຕັ້ງປະຕິບັດໄດ້ແບບຕໍ່ເນື່ອງ ແລະ ມີປະສິດທິຜົນ. ໂດຍທົ່ວໄປແລ້ວ ການປະສານງານດ້ານນະໂຍບາຍ ລະຫວ່າງກະຊວງ ກັບກະຊວງ ແລະ ກະຊວງ ກັບ ບັນດາແຂວງ ແມ່ນ ມີຄວາມທ້າທາຍຢູ່ທຸກປະເທດໃນໂລກ ແລະ ຫົວຂໍ້ດ້ານການປະສານງານນີ້ ກໍ່ເປັນບັນຫາໜຶ່ງ ທີ່ ນັກລົງທຶນຍົກຂຶ້ນມາເປັນບັນຫາບຸລິມະສິດຢ່າງຕໍ່ເນື່ອງ.

*2) ພາສີ ແລະ ອາກອນ*

ພວກຂ້າພະເຈົ້າຮັບຮູ້ດີ ວ່າ ການປະຕິຮູບແມ່ນມີຄວາມສຳຄັນຫຼາຍ ທີ່ລັດຖະບານພວມຈັດຕັ້ງປະຕິບັດໄປພ້ອມກັບ ການເພີ່ມການເກັບອາກອນລາຍຮັບ ແລະ ເຊື່ອມການປະຕິຮູບເຂົ້າກັບລະບົບອາກອນ.

ອາກອນແມ່ນຈຸດສຳຄັນຂອງການຕັດສິນໃຈໃນການລົງທຶນ ແລະ ບັນຫານີ້ໄດ້ຖືກຍົກຂື້ນມາສະເໜີໂດຍນັກລົງທຶນຫຼາຍເທື່ອວ່າ ນະໂຍບາຍຜ່ອນຜັນອາກອນຈຳເປັນຕ້ອງມີຄວາມແນ່ນອນ ແລະ ສະເໝີພາບຄືກັນໝົດ, ແລະ ຕ້ອງປະຕິບັດຕາມກົດກະຕິກາ, ປະຕິບັດຄືກັນໝົດທຸກລະບຽບກົດໝາຍ ແລະ ທຸກໃບຄຳຮ້ອງຂໍການສຳປະທານລົງທຶນ.

ລັດຖະບານມີຄວາມຄືບໜ້າຫຼາຍໃນການນຳສະເໜີການຈ່າຍອາກອນຜ່ານລະບົບອອນລາຍ. ແຕ່ເຖິງແນວໃດກໍ່ຕາມ, ສະມາຊິກຂອງສະພາການຄ້າອົດສະຕຣາລີ ມີປະສົບການກ່ຽວກັບ ການຈ່າຍແບບລະບົບອອນລາຍນີ້ ວ່າ ບາງເທື່ອເຖິງຈະອອກໃບຮັບເອກະສານໃຫ້ແລ້ວ ແຕ່ ກໍ່ຍັງມີບາງເທື່ອທີ່ເອກະສານເສຍ. ອີກດ້ານໜຶ່ງ ແມ່ນ ນະໂຍບາຍການບໍລິການປະຕູດຽວ ຂອງຂະແໜງການຂົນສົ່ງ,

ຖືວ່າໄດ້ຮັບການຈັດຕັ້ງປະຕິບັດດ້ວຍດີຕະຫຼອດມາ ແຕ່ ພວກຂ້າພະເຈົ້າເຂົ້າໃຈວ່າ ມາຮອດໄລຍະໜຶ່ງ ແມ່ນ ໄດ້ມີການຢຸດເຊົາແບບກະທັນຫັນ, ເຮັດໃຫ້ສົ່ງຜົນກະທົບ ເຖິງໄລຍະເວລາໃນການອອກໃບທະບຽນລົດ ແລະ ການແຈ້ງເສຍອາກອນ ທັງ ເຮັດໃຫ້ເກີດມີຜົນກະທົບຕໍ່ລາຍຮັບຂອງທຸລະກິດທີ່ພວມດຳເນີນຢູ່.

### *3) ປັບປຸງການເຊື່ອມໂຍງພາກພື້ນດິນ ແລະ ແຜນການກຽມຮັບຜົນປະໂຫຍດດ້ານບວກຈາກການພັດທະນາພື້ນຖານໂຄງລ່າງ ຂອງ ສປປ ລາວ*

ຢູ່ ສປປ ລາວ ມີພຽງບາງບໍລິສັດຖືວ່າເປັນສ່ວນໜ້ອຍທີ່ມີການສົ່ງອອກໂດຍກົງ. ການທີ່ເປັນປະເທດບໍ່ມີທາງອອກສູ່ທະເລ ແມ່ນເປັນຂໍ້ຈຳກັດສຳລັບ ສປປ ລາວ, ແຕ່ ຍ້ອນມີທີ່ຕັ້ງ ທີ່ເປັນຍຸດທະສາດໃນພາກພື້ນແມ່ນ້ຳຂອງ ເຮັດໃຫ້ ສປປ ລາວ ສາມາດຍາດໄດ້ຜົນປະໂຫຍດ ຈາກການປັບປຸງການເຊື່ອມໂຍງທາງພາກພື້ນດິນ, ແລະ ຍັງເຮັດໃຫ້ ສາມາດຍາດໄດ້ໂອກາດໃນການສ້າງເສດຖະກິດໃຫ້ເຂັ້ມແຂງຂຶ້ນກວ່າເກົ່າ ຈາກການລົງທຶນຂອງນັກລົງທຶນຕ່າງປະເທດ.

ສປປ ລາວ ມີການພັດທະນາພື້ນຖານໂຄງລ່າງຫຼາຍດ້ານທາງພາກພື້ນດິນ ເຊິ່ງເປັນສ່ວນສຳຄັນໃນການສ້າງສັກກະຍະພາບ ເພື່ອປັບປຸງການເຊື່ອມໂຍງເສດຖະກິດ ແລະ ການເຊື່ອມໂຍງຂອງພາກພື້ນ. ເພື່ອໃຫ້ພາກທຸລະກິດໄດ້ຮັບຜົນປະໂຫຍດຈາກການເຕີບໃຫຍ່ດ້ານການພັດທະນາພື້ນຖານໂຄງລ່າງນີ້, ສປປ ລາວ ຄວນຈະສຸມໃສ່ການປັບປຸງ ການເຊື່ອມໂຍງທາງພາກພື້ນດິນ, ອອກນະໂຍບາຍ ຈັດເປັນບຸລິມະສິດບັນດາໂຄງການຕ່າງໆ ເພື່ອໃຫ້ແນ່ໃຈວ່າ ການປະຕິຮູບພາກສ່ວນທີ່ປິ່ນອ້ອມຕ່າງໆ ສາມາດຈັດຕັ້ງປະຕິບັດໄປພ້ອມໆກັນ, ຍົກຕົວຢ່າງ ໃນຂົງເຂດການອຳນວຍຄວາມສະດວກດ້ານການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆກໍ່ຕ້ອງໄດ້ຮັບການປັບປຸງເຊັ່ນກັນ.

### *4) ປັບປຸງດ້ານຊັບພະຍາກອນມະນຸດ*

ການມີແຮງງານທີ່ບໍ່ມີສີມື ແມ່ນຂໍ້ຈຳກັດຂອງການລົງທຶນຂະໜາດໃຫຍ່ຫຼາຍດ້ານ. ໃນຂະນະທີ່ຮັບຮູ້ວ່າສະພາບງົບປະມານໃນປະຈຸບັນມີຄວາມຈຳກັດ, ລັດຖະບານລາວ ຄວນສືບຕໍ່ຈັດບູລິມະສິດໃນດ້ານລາຍຈ່າຍສາທາລະນະ ໂດຍສະເພາະ ໃຫ້ແກ່ຂະແໜງສຶກສາ ແລະການເຝິກອົບຮົມວິຊາຊີບ ເພື່ອໃຫ້ແນ່ໃຈວ່າ ສປປ ລາວ ສາມາດຍາດໄດ້ຜົນປະໂຫຍດສູງສຸດ ຈາກການມີພົນລະເມືອງໜຸ່ມສາວເປັນຈຳນວນຫຼາຍ ແລະ ເຂົາເຈົ້າເຫຼົ່ານັ້ນສາມາດກາຍເປັນກຳລັງແຮງຂອງຊາດ ດ້ວຍການກາຍເປັນແຮງງານທີ່ມີສີມືໃນອະນາຄົດ.

ນາຍຈ້າງ ຄວນຈະໄດ້ຮັບການຜ່ອນຜັນ ຫຼື ມີການໂຈະບາງອາກອນລາຍຈ່າຍ ເພື່ອສາມາດແບ່ງງົບປະມານ ມາຈັດການເຝິກອົບຮົມໃຫ້ພະນັກງານພາຍໃນອົງກອນໄດ້.

ນອກຈາກນັ້ນ, ພວກຂ້າພະເຈົ້າ ຂໍຮຽກຮ້ອງມາຍັງພາກລັດ ພິຈາລະນາຮັບເອົາຊ່ຽວຊານຕ່າງປະເທດທີ່ມີຄຸນນະພາບ ເຂົ້າມາຊ່ວຍ ໃນຂະແໜງການທີ່ເຂົາເຈົ້າສາມາດສ້າງຄວາມເຂັ້ມແຂງດ້ານເຝິກທັກສະສີມື ແລະ ຍົກລະດັບມາດຕະຖານການສຶກສາ ເຊິ່ງໃນອະນາຄົດເຂົາເຈົ້າເຫຼົ່ານີ້ມີຄວາມຈຳເປັນ ທີ່ຈະກັບຄືນໄປຮັບໃຊ້ສິ່ງທີ່ເຂົາໄດ້ຮຽນມາເຂົ້າໃນຂະແໜງອຸດສະຫະກຳ ແລະ ການບໍລິການຂອງ ສປປ ລາວ.

### *5) ສຸມໃສ່ປັບປຸງ 'ຄວາມສະດວກໃນການດຳເນີນທຸລະກິດ' ໃນ ສປປ ລາວ*

ທະນາຄານໂລກ ຈະສົ່ງບົດລາຍງານເຖິງ ພະນະທ່ານ ເຊິ່ງໃນນັ້ນ ຈະມີຂໍ້ມູນຫຼາຍດ້ານ, ແຕ່ພວກຂ້າພະເຈົ້າ ຂໍເນັ້ນບາງຈຸດສຳຄັນ ຈາກຄຳເຫັນຂອງ ສະມາຊິກສະພາການຄ້າທັງໝົດ ໂດຍສະເພາະດ້ານການປັບປຸງການລົງທຶນຂອງຕ່າງປະເທດ ຢູ່ ໃນ ສປປ ລາວ. ລວມມີ:

i. ***ການເລີ່ມເຮັດທຸລະກິດ.***

ການເລີ່ມເຮັດທຸລະກິດ ຢູ່ ໃນ ສປປ ລາວ ແມ່ນຈະໃຊ້ເວລາປະມານ 173 ມື້ ສົມທຽບໃສ່ ປະເທດອື່ນຢູ່ໃນພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ ແມ່ນ ໃຊ້ເວລາະມານ 25,6 ມື້. ຢູ່ໃນລາວຂະບວນການຂອງການເຮັດທຸລະກິດ ບໍ່ພຽງແຕ່ຈຳເປັນຕ້ອງມີເອກະສານຫຼາຍລາຍການ, ແຕ່ຍັງຈຳເປັນຕ້ອງໄດ້ຮັບການເຊັນອະນຸມັດ ຈາກຫຼາຍກະຊວງ ແລະ ຫຼາຍກົມ. ປະເທດສິງກະໂປເປັນແບບຢ່າງຂອງຄວາມສຳເລັດ ຂອງການເລີ່ມເຮັດທຸລະກິດທີ່ດີ ກໍ່ຄື ລົງທະບຽນໃບຄຳຮ້ອງຂໍເຮັດທຸລະກິດ ທາງລະບົບອອນລາຍ/ແບບອັດຕະໂນມັດ 'ສາມຂັ້ນຕອນ' ທີ່ນຳເອົາພາກສ່ວນທີ່ກ່ຽວຂ້ອງຈາກພາກສ່ວນຕ່າງໆຂອງພາກລັດ ແລະ ຂະບວນການທັງໝົດມາຢູ່ນຳກັນ ແມ່ນ ເພື່ອອຳນວຍຄວາມສະດວກໃຫ້ມີການອະນຸມັດໃຫ້ໄວເທົ່າທີ່ຈະໄວໄດ້. ແບບຢ່າງນີ້ ສາມາດລຸດຜ່ອນຈຳນວນມື້ ແລະຂັ້ນຕອນຕ່າງໆລົງ ເພື່ອໃຫ້ທຸລະກິດໄດ້ເລີ່ມ.

ສະມາຊິກສະພາການຄ້າທັງໝົດ ມີຄຳເຫັນວ່າ ເຖິງແມ່ນ ຫຼາຍບໍລິສັດ ສາມາດເລີ່ມທຸລະກິດໃນລະດັບສູນກາງໄດ້ ໂດຍຜ່ານຂະບວນການ ERC, ແຕ່ຂະບວນການຂອງໃບອະນຸຍາດໃຫ້ດຳເນີນທຸລະກິດ ແມ່ນ ບໍ່ຈະແຈ້ງ ແລະ ໃຊ້ເວລາດົນ ໝາຍຄວາມວ່າ ຜົນ

ດ້ານບວກໃນຂະບວນການ ERC ຖືກລະເລີຍ ຍ້ອນທຸລະກິດຍັງບໍ່ໄດ້ຮັບການອະນຸມັດຄືເກົ່າ. ພວກຂ້າພະເຈົ້າ ຂໍຮຽກຮ້ອງມາຍັງໜ່ວຍງານ ແລະ ກົມທີ່ກ່ຽວຂ້ອງຕ່າງໆປະສານງານກັນ, ຍົກເອົາແບບຢ່າງຈາກປະເທດສິງກະໂປ ທີ່ ມີຂະບວນການຂອງການອະນຸມັດ ຕັ້ງແຕ່ເລີ່ມຕົ້ນຈົນຈົບ ບໍ່ມີບັນຫາຫຍັງຂ້ອງຄາ ແລະ ຮຽກຮ້ອງໃຫ້ ມີການສືບຕໍ່ຈັດຕັ້ງປະຕິບັດການປະຕິຮູບ ລະບຽບການຕ່າງໆ ໃນຂັ້ນແຂວງນຳ.

ບັນດາແຂວງຕ່າງໆ ມີບົດບາດສຳຄັນ ໃນການພັດທະນາເສດຖະກິດ ຢູ່ໃນ ສປປ ລາວ ແລະຍ້ອນເຫດຜົນດັ່ງກ່າວ ພວກເຮົາເຊື່ອໝັ້ນວ່າ ການສຸມໃສ່ ໃຫ້ມີການຈັດຕັ້ງປະຕິບັດຕົວຈິງຢູ່ຂັ້ນແຂວງໄດ້ ຄືກັນກັບຂັ້ນສູນກາງ ແມ່ນຖືເປັນຈຸດສຳຄັນ.

ii. *ການປະຕິບັດຕາມພັນທະສັນຍາ.*

ການປະຕິບັດຕາມເງື່ອນໄຂຕ່າງໆຕາມພັນທະຂອງສັນຍາ ແມ່ນສືບຕໍ່ເປັນສິ່ງທ້າທາຍ ແລະ ໃຊ້ເວລາດົນໃນການດຳເນີນທຸລະກິດ. ມີຫຼາຍເຫດຜົນຄື ຍ້ອນມີການຊັກຊ້າດ້ານນິຕິກຳຕ່າງໆ, ຄວາມສາມາດມີຈຳກັດ, ມີຊັບພະຍາກອນບໍ່ພຽງພໍ ແລະ ຂາດຂະບວນການຕັດສິນຂອງສານທີ່ວ່ອງໄວທັນສະພາບການ ເພື່ອແກ້ໄຂຂໍ້ຂັດແຍ່ງດ້ານການຄ້າ.

ສະມາຊິກຂອງພວກເຮົາ ໂດຍສະເພາະແມ່ນ ມາຈາກຂະແໜງການບໍລິການດ້ານການເງິນ ເຫັນວ່າ ຂະບວນການຂອງສານໃນການເອົາຜິດຜູ້ທີ່ຕິດໜີ້ແມ່ນ ໃຊ້ເວລາດົນ ເຖິງແມ່ນວ່າຈະມີຫຼັກຖານ ແລະ ມີເອກະສານເອົາຜິດຈະແຈ້ງແລ້ວກໍ່ຕາມ, ລວມໄປເຖິງຂະບວນການຂອງການໄດ້ຮັບການແກ້ໄຂ ແມ່ນ ເປັນສິ່ງທ້າທາຍຫຼາຍ, ດັ່ງນັ້ນ ຜົນກະທົບດ້ານລົບ ທີ່ກ່ຽວຂ້ອງກັບການກະທຳຜິດກ່ຽວກັບໜີ້ສິນ ແມ່ນມີອັດຕາສູງຫຼາຍຖ້າເບິ່ງພາບລວມລະດັບຊາດ ແລະ ສິ່ງຜົນກະທົບໂດຍກົງ ຕໍ່ຄວາມສາມາດໃນການຂະຫຍາຍທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍອື່ນໆ ໃນດ້ານຄວາມສາມາດໃນການຢືມເງິນ ເພື່ອມາສະໜັບສະໜູນການດຳເນີນທຸລະກິດໃນຕໍ່ໜ້າ.

***ສະຫຼຸບ:***

ຮຽນພະນະທ່ານ, ບົດກ່າວຂອງພວກຂ້າພະເຈົ້າມື້ນີ້ ແມ່ນ ສຸມໃສ່ ສິ່ງທີ່ນັກລົງທຶນຕ່າງປະເທດຈຳເປັນຕ້ອງມີ ແລະ ເປັນຫຍັງເຂົາເຈົ້າຈຶ່ງຕ້ອງການມາລົງທຶນຢູ່ ສປປ ລາວ.

ທ້າຍສຸດນີ້ ພວກຂ້າພະເຈົ້າ ຂໍຖືໂອກາດນີ້ ເນັ້ນຢ້ຳວ່າ ກອງປະຊຸມພາກລັດ-ເອກະຊົນ ແລະກອງປະຊຸມວຽກງານຂະແໜງການຄ້າ ແມ່ນເວທີທີ່ດີທີ່ສຸດ ໃນການເປີດໂອກາດໃຫ້ພາກເອກະຊົນໄດ້ອອກສຽງ ມີສ່ວນຮ່ວມໃນການພັດທະນາ ທັງແກ່ທຸລະກິດຂອງເຂົາເຈົ້າ ແລະ ແກ່ປະເທດຊາດ. ພວກຂ້າພະເຈົ້າ ຂໍຮຽກຮ້ອງໃຫ້ ລັດຖະບານ ແລະ ສະພາການຄ້າ ແລະ ອຸດສະຫະກຳ ແຫ່ງຊາດລາວສືບຕໍ່ ຈັດຕັ້ງປະຕິບັດການປະຕິຮູບ ໂດຍການຈັດໃຫ້ມີ **'ກອງປະຊຸມງານສຳມະນາແບບອີງໃສ່ຜົນໄດ້ຮັບຕົວຈິງ'** ເພື່ອໃຫ້ແນ່ໃຈວ່າ ການປະຕິຮູບນີ້ ມີປະສິດທິຜົນ ແລະ ເປັນໄປໄດ້ແທ້, ມີການເຜີຍແຜ່ 'ຂໍ້ມູນ' ທີ່ ສ້າງໃຫ້ເກີດໝາກຜົນແກ່ ພາກເອກະຊົນ ແລະ ປະເທດຊາດຢ່າງແທ້ຈິງ.

ຮຽນພະນະທ່ານ, ສະມາຊິກຂອງສະພາການຄ້າສາກົນ ພ້ອມແລ້ວທີ່ຈະລົງທຶນ ຢູ່ໃນ ສປປ ລາວ ຍ້ອນພວກເຮົາເຊື່ອໝັ້ນ ໃນສັກກະຍະພາບຂອງປະເທດລາວ ແລະ ພວກຂ້າພະເຈົ້າເຊື່ອໝັ້ນໃນວິໄສທັດ ແລະ ເຈດຈຳນົງຂອງລັດຖະບານ ທີ່ຈະເຮັດວຽກກັບ ນັກລົງທຶນສາກົນ.

ພາລະບົດບາດຂອງສະພາການຄ້າສາກົນ ແມ່ນ ປະສານງານ ແລະ ອຳນວຍຄວາມສະດວກໃຫ້ສະມາຊິກນັກທຸລະກິດ ແລະ ສ້າງໂອກາດໃນການລົງທຶນໃຫ້ເຂົາເຈົ້າໃຫ້ຫຼາຍທີ່ສຸດ, ບົດບາດຂອງພວກເຮົາ ຍັງເປັນກະບອກສຽງ ແລະ ໜ່ວຍງານປະສານງານໃຫ້ ສະພາການຄ້າສາກົນ ເປັນຂົວຕໍ່ຂອງວິໄສທັດຂອງລັດຖະບານ ແລະ ຄວາມຄາດຫວັງຂອງນັກທຸລະກິດໃຫ້ໄດ້ໃກ້ຊິດ ແລະ ເຂົ້າໃຈກັນ. ພວກເຮົາໃນຖານະທີ່ເປັນສະພາການຄ້າສາກົນ ພ້ອມແລ້ວ ທີ່ຈະຮ່ວມກັນສະໜັບສະໜູນ ແລະຊ່ວຍເຫຼືອພາກລັດທຸກດ້ານເທົ່າທີ່ເປັນໄປໄດ້. ພວກຂ້າພະເຈົ້າພ້ອມແລ້ວ ທີ່ຈະມີໂອກາດໄດ້ພົບປະແລະ ຮ່ວມສົນທະນາ ກັບພາກລັດຕື່ມໃນໂອກາດທີ່ທ່ານເຫັນວ່າເໝາະສົມ.

ຂໍຕາງໜ້າໃຫ້ຄະນະສະພາການຄ້າສາກົນ ຢູ່ໃນ ສປປ ລາວ ສະແດງຄວາມຂອບໃຈຢ່າງສູງ ມາຍັງພະນະທ່ານ ທີ່ ສະແດງຄວາມສົນໃຈເປັນພິເສດ ທັງຍັງມີເຈດຈຳນົງ ທີ່ຈະປະຕິຮູບພາກທຸລະກິດລວມໄປເຖິງການຊີ້ນຳນຳພາ ຂອງທ່ານ ຕໍ່ບັນດາທ່ານ ລັດຖະມົນຕີ ໃນການສົ່ງເສີມຊຸກຍູ້ໃຫ້ເກີດການສົນທະນາລະຫວ່າງ ພາກລັດ ແລະ ເອກະຊົນ ເຊັ່ນກອງປະຊຸມທີ່ມີຄວາມໝາຍຄວາມສຳຄັນ ໃນມື້ນີ້. ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈມາຍັງ ສະມາຊິກສະພາການຄ້າຂອງທັງອົດສະຕຣາລີ ແລະສະພາການຄ້າສາກົນອື່ນໆ ທີ່ໄດ້ຊ່ວຍກັນມີຄຳເຫັນຕໍ່ບົດກ່າວ ຂອງຂ້າພະເຈົ້າ ແລະ ຂໍສະແດງຄວາມຂອບໃຈມາຍັງ ທ່ານ ອຸເດດ ແລະ ພະນັກງານຂອງສະພາການຄ້າ ແລະ ອຸດສະຫະກຳ ແຫ່ງຊາດລາວ ສຳລັບການສະໜັບສະໜູນຫຼາຍດ້ານ ແລະ ຄວາມປາດຖະໜາດີອັນແຮງກ້າ ທີ່ຈະເຫັນຄວາມເຂັ້ມແຂງຂອງການລົງທຶນຕ່າງປະເທດຢູ່ ໃນ ສປປ ລາວ ໃຫ້ໄດ້ຕາມຄາດໝາຍທີ່ທຸກພາກສ່ວນໄດ້ວາງໄວ້.

ຂໍອວຍພອນໃຫ້ກອງປະຊຸມ ນັກທຸລະກິດລາວ ຄັ້ງທີ 12 ປະສົບຜົນສຳເລັດຢ່າງຈົບງາມ!

ຂໍຂອບໃຈ